ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 06980/ກພສ

ນະຄອນຫຼວງວຽງຈັນ, ວັນທີ 03 ສິງຫາ 2023

# ແຈ້ງການ

ເຖິງ: - ຫົວໜ້າພະແນການກົມພາສີ
- ຫົວໜ້າພາສີປະຈໍາແຂວງ, ນະຄອນຫຼວງ
- ຫົວໜ້າດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ
- ອໍານວຍການ ບໍລິສັດບີແວັກ (ລາວ) ຈໍາກັດ

ເລື່ອງ: ການໂຈະການຈັດເກັບຄ່າບໍລິການແຈ້ງການຜ່ານລະບົບປະຕູດຽວ LNSW ຕາມແຈ້ງການຂອງກົມພາສີ ສະບັບເລກທີ 03633/ກງ, ລົງວັນທີ 02 ພຶດສະພາ 2023

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ລັດຖະບັນຍັດປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021;
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ ວ່າດ້ວຍການອະນຸມັດໃຫ້ປັບເນື້ອໃນຢູ່ມາດຕາ 15.1 ຂອງສັນຍາໃນການຈັດເກັບຄ່າບໍລິການຂອງສັນຍາ ສະບັບລົງວັນທີ 28 ມັງກອນ 2013;

ເພື່ອຮັບປະກັນໃຫ້ການຈັດເກັບຄ່າບໍລິການແຈ້ງພາສີຜ່ານລະບົບປະຕູດຽວ (Lao National Single Window – LNSW) ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ກົມພາສີ ອອກແຈ້ງການ ດັ່ງນີ້:

1. ໃຫ້ໂຈະການຈັດເກັບຄ່າບໍລິການແຈ້ງພາສີຜ່ານລະບົບປະຕູດຽວ LNSW ຕາມແຈ້ງການຂອງກົມພາສີ ສະບັບເລກທີ 03633/ກພສ, ລົງວັນທີ 02 ພຶດສະພາ 2023 ແລະ ໃຫ້ຈັດເກັບຄ່າບໍລິການດັ່ງກ່າວ ຕາມອັດຕາທີ່ກໍານົດໄວ້ໃນ ຂໍ້ 3, ມາດຕາ 17 ຂອງລັດຖະບັນຍັດປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ຢ່າງເຂັ້ມງວດ;
2. ໃຫ້ພະແນກຈັດຕັ້ງ, ບໍລິຫານ ແລະ ການເງິນ ຄົ້ນຄວ້າ ແລະ ນໍາສະເໜີກົມພາສີ ແຕ່ງຕັ້ງຄະນະຮັບຜິດຊອບເຈລະຈາ ປັບປຸງສັນຍາສໍາປະທານການພັດທະນາລະບົບແຈ້ງພາສີປະຕູດຽວ ໃຫ້ສອດຄ່ອງຕາມທິດຊີ້ນໍາຂອງກະຊວງການເງິນ;



Scanned with CamScanner

3. ໃຫ້ບໍລິສັດບີແວັກ (ລາວ) ຈຳກັດ ໃຫ້ຄວາມຮ່ວມມືໃນການກະກຽມ ເອກະສານສັນຍາ, ເອກະສານນິຕິກຳ ລວມທັງຂໍ້ມູນກ່ຽວຂ້ອງ ທີ່ເປັນບ່ອນອີງໃຫ້ແກ່ການຄົ້ນຄ້ວາ ແລະ ເຂົ້າຮ່ວມເຮັດວຽກກັບຄະນະວິຊາການກົມພາສີ ເພື່ອປັບປຸງສັນຍາສຳປະທານການພັດທະນາລະບົບແຈ້ງພາສີປະຕູດຽວໃຫ້ສຳເລັດຕາມຄາດໝາຍ;
4. ແຈ້ງການ ສະບັບນີ້ປ່ຽນແທນແຈ້ງການຂອງກົມພາສີ ສະບັບເລກທີ 03633/ກພສ, ລົງວັນທີ 02 ພຶດສະພາ 2023 ແລະ ມີຜົນນຳໃຊ້ນັບແຕ່ວັນລົງທີ່ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມ**

ພູເຂົາຄຳ ວັນນະວົງໄຊ



Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 05633 /ກພສ.

ນະຄອນຫຼວງວຽງຈັນ, ວັນທີ 02 ມິຖຸນາ 2023

# ແຈ້ງການ

**ເຖິງ:** ຫົວໜ້າພະແນກອ້ອມຂ້າງກົມພາສີ, ຫົວໜ້າພາສີປະຈໍາແຂວງ, ນະຄອນຫລວງວຽງຈັນ, ດ່ານພາສີຊາຍແດນ ໃນຂອບເຂດ ທົ່ວປະເທດ ແລະ ບໍລິສັດບີແວັກ (ລາວ) ຈໍາກັດ BIVAC (LAO) Co., Ltd.

**ເລື່ອງ:** ການກໍານົດມູນຄ່າບໍລິການຈັດເກັບຄ່າບໍລິການ ການພັດທະນາໂຄງການປະຕູດຽວແຫ່ງຊາດ ແລະ ຄ່າການບໍາລຸງຮັກສາອຸປະກອນ ການພັດທະນາໃນການເຊື່ອມຕໍ່ການຕິດຕັ້ງລະບົບການຄຸ້ມຄອງ ການຊໍາລະພາສີ-ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການ ແບບລວມສູນ (ໂຄງການ Smart Customs) ຂອງຂະແໜງພາສີ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0289/ກງ, ລົງວັນທີ 30 ມັງກອນ 2023 ວ່າດ້ວຍການອະນຸມັດໃຫ້ປັບເນື້ອໃນຢູ່ໃນມາດຕາ 15.1 ຂອງສັນຍາໃນການຈັດເກັບຄ່າບໍລິການ ຂອງສັນຍາສະບັບລົງວັນທີ 28 ມັງກອນ 2013;

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0289/ກງ ລົງວັນທີ 30 ມັງກອນ 2023 ໃຫ້ມີຄວາມເປັນເອກະພາບກັນໃນການຄຸ້ມຄອງ ໃນຂອບເຂດທົ່ວປະເທດ ແລະ ສາມາດກວດສອບ ໄດ້ຕາມລະບຽບການ.

**ກົມພາສີ ອອກແຈ້ງການ ດັ່ງນີ້:**

1. ການຈັດເກັບຄ່າບໍລິການ ແຈ້ງພາສີປະຕູດຽວແຫ່ງຊາດ ແມ່ນໃຫ້ປະຕິບັດຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0289/ກງ, ລົງວັນທີ 30 ມັງກອນ 2023 ຈໍານວນ: 291.000 ກີບຕໍ່ທຸລະກໍາ ແມ່ນໃຫ້ດໍາເນີນການ ຄືດັ່ງນີ້:

1) ມູນຄ່າບໍລິການ ການສໍາປະທານ ການປະຕິບັດໂຄງການປະຕູດຽວແຫ່ງຊາດ ແລະ ຄ່າບໍາລຸງຮັກສາອຸປະກອນການພັດທະນາໃນການເຊື່ອມຕໍ່ການຕິດຕັ້ງລະບົບການຄຸ້ມຄອງ ການຊໍາລະພາສີ-ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການ



Scanned with CamScanner

ແບບລວມສູນ (ໂຄງການ Smart Customs) ຂອງຂະແໜງພາສີ) ຈຳນວນ, 291.000 ກີບຕໍ່ທຸລະກຳ ໂດຍມອບເຂົ້າບັນຊີ ຂອງ ບໍລິສັດບີແວັກ (ລາວ) ຈຳກັດ BIVAC (LAO) Co., Ltd. ຕາມໝາຍເລກບັນຊີຄື:

- ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໝາຍເລກບັນຊີ 010110001181791001;
- ທະນາຄານພັດທະນາລາວ ໝາຍເລກບັນຊີ 0302000010003513;

2) ໃຫ້ພະແນກຄຸ້ມຄອງລະບົບຂໍ້ມູນຂ່າວສານ ແລະ ແຜນການ ກົມພາສີ, ພາສີປະຈຳແຂວງ, ພາສີນະຄອນຫລວງ, ດ່ານພາສີຊາຍແດນ ແລະ ບໍລິສັດບີແວັກລາວ ຈຳກັດ BIVAC (LAO) Co., Ltd. ສະຫລຸບ, ຕິດຕາມການລາຍຮັບດັ່ງກ່າວ ຮ່ວມກັນ ເປັນແຕ່ລະເດືອນ, 03 ເດືອນ, 06 ເດືອນ, 09 ເດືອນ ແລະ ປີ;

2. ການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາ ຫຼື ຂໍ້ຫຍຸ້ງຍາກ ໃຫ້ສັງລວມ, ລາຍງານ ກົມພາສີ ເພື່ອເປັນຂໍ້ມູນໃນການລາຍງານ ກະຊວງການເງິນ ມີທິດຊີ້ນຳໃນການຈັດຕັ້ງປະຕິບັດ ໃຫ້ທັນກັບສະພາບການ;

3. ແຈ້ງການ ສະບັບນີ້ ມີຜົນນຳໃຊ້ນັບແຕ່ວັນທີ **08 ພຶດສະພາ 2023** ເປັນຕົ້ນໄປ ຈົນກ່ວາຈະມີການປັບປຸງປ່ຽນ ແປງ, ແຈ້ງການໃດ ທີ່ຂັດກັບແຈ້ງການສະບັບນີ້ແມ່ນຖືວ່າລົບລ້າງ.

ດັ່ງນັ້ນ, ຈຶ່ງແຈ້ງມາ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ..

**ຫົວໜ້າກົມ**

ກະຊວງການເງິນ
ກົມພາສີ

ພູເຂົາຄຳ ວັນນະວົງໄຊ



Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງການເງິນ

ເລກທີ 0283 /ກງ

ນະຄອນຫລວງວຽງຈັນ, ວັນທີ 30 ມັງກອນ 2023

# ຂໍ້ຕົກລົງ

## ວ່າດ້ວຍການອະນຸມັດໃຫ້ປັບເນື້ອໃນຢູ່ໃນມາດຕາ 15.1 ຂອງສັນຍາໃນການຈັດເກັບຄ່າບໍລິການ ຂອງສັນຍາສະບັບລົງວັນທີ 28 ມັງກອນ 2013

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ ລົງວັນທີ 14 ຕຸລາ 2021;
- ອີງຕາມ ໜັງສືລາຍງານ ຂອງກົມພາສີ ສະບັບເລກທີ 00557/ກພສ, ລົງວັນທີ 24 ມັງກອນ 2023,
- ອີງຕາມ ການຄົ້ນຄວ້າເຫັນດີເປັນເອກະພາບຂອງລັດຖະມົນຕີ ແລະ ຮອງລັດຖະມົນຕີ ກະຊວງການເງິນ.

### ລັດຖະມົນຕີກະຊວງການເງິນ ຕົກລົງ:

ມາດຕາ1: ອະນຸມັດໃຫ້ກົມພາສີ ປັບເນື້ອໃນຢູ່ໃນມາດຕາ 15.1 ຂອງສັນຍາໃນການຈັດເກັບຄ່າບໍລິການ ຂອງສັນຍາສະບັບລົງວັນທີ 28 ມັງກອນ 2013, ກ່ຽວກັບການສຳປະທານການປະຕິບັດໂຄງການປະຕູດຽວແຫ່ງຊາດ ຈາກ ຈຳນວນ 120.000 ກີບຕໍ່ທຸລະກຳ ເປັນຈຳນວນ 291.000 ກີບຕໍ່ທຸລະກຳ, ເທົ່າກັບ 17 ໂດລາ 37 ເຊັນ, ການເກັບຄ່າບໍລິການ ແມ່ນໃຫ້ເກັບເປັນສະກຸນເງິນກີບ ຕາມອັດຕາທະນາຄານ ສປປລາວ ກຳນົດໃນແຕ່ລະໄລຍະ, ໃນນັ້ນ ຈຳນວນ 50.000 ກີບຕໍ່ທຸລະກຳ ແມ່ນເປັນຄ່າບໍລຸງຮັກສາອຸປະກອນການພັດທະນາໃນການເຊື່ອມຕໍ່ການຕິດຕັ້ງລະບົບການຄຸ້ມຄອງ ການຊຳລະພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການແບບລວມສູນ (ໂຄງການ Smart Customs) ຂອງຂະແໜງພາສີ;

ມາດຕາ2: ມອບໃຫ້ຫ້ອງການກະຊວງການເງິນ, ກົມງົບປະມານແຫ່ງລັດ, ກົມພາສີ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້, ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ3: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ບຸນໂຈມ ອຸບົນປະເສີດ